ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ ແຫ່ງ ສປປ ລາວ

ຫ້ອງການ

ເລກທີ ໒໔໘ /ຫກ

ນະຄອນຫຼວງວຽງຈັນ, ວັນທີ ໓໐ ກັນຍາ 2025

## ໜັງສືແຈ້ງການ

ເຖິງ: - ບັນດາທ່ານ ຫົວໜ້າກົມ ແລະ ອົງການລັດທຽບເທົ່າກົມ ແລະ ທຫລ ປະຈຳພາກ;
- ບັນດາທ່ານ ຜູ້ອຳນວຍການທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ ແລະ ເອກະຊົນ.

ເລື່ອງ: ເພີ່ມທະວີການປ້ອງກັນເວນຍາມສຳນັກງານຂອງຕົນ ເນື່ອງໃນໂອກາດຕ້ອນຮັບວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 57 ປີ ແລະ ບຸນຊ່ວງເຮືອ ນະຄອນຫຼວງວຽງຈັນ ປະຈຳປີ 2025.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັກສາຄວາມປອດໄພຂອງ ທຫລ, ທະນາຄານທຸລະກິດລັດ ແລະ ທະນາຄານສະເພາະກິດ ສະບັບເລກທີ 175/ທຫລ, ລົງວັນທີ 16 ມິນາ 2022;

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຕາງໜ້າຄະນະປ້ອງກັນພາຍໃນຂະແໜງທະນາຄານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ເພື່ອເພີ່ມທະວີການຮັກສາຄວາມປອດໄພຮອບດ້ານພາຍໃນສຳນັກງານຂອງຕົນ ເນື່ອງໃນໂອກາດຕ້ອນຮັບວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 57 ປີ (7 ຕຸລາ 1968 - 7 ຕຸລາ 2025) ແລະ ບຸນຊ່ວງເຮືອນະຄອນຫຼວງວຽງຈັນ ປະຈຳປີ 2025 ທີ່ທ່າວັດຈັນ, ໂດຍໃຫ້ເສີມກຳລັງຂອງພະນັກງານ ສົມທົບກັບກຳລັງເຈົ້າໜ້າທີ່ຕຳຫຼວດປ້ອງກັນທີ່ຕັ້ງແຕ່ລະຈຸດ ເພື່ອປະຈຳການປ້ອງກັນເວນຍາມ ຕະຫຼອດ **24** ຊົ່ວໂມງ, ໂດຍແບ່ງອອກເປັນ **2** ພາກ ຄື: ພາກກາງເວັນ ເລີ່ມແຕ່ **08:00- 18:00** ໂມງ ແລະ ພາກກາງຄືນ ເລີ່ມແຕ່ **18:00** ຫາ **6:00** ໂມງ (ມື້ໃໝ່) ໂດຍເລີ່ມປະຕິບັດແຕ່ວັນທີ **5** ຫາ **9** ຕຸລາ **2025**.

**ໝາຍເຫດ**: ສະເພາະພະນັກງານຜູ້ທີ່ຖືກມອບໝາຍໃຫ້ມາຍາມພາກກາງຄືນ, ອະນຸຍາດໃຫ້ພັກຜ່ອນເຄິ່ງວັນ (ພາກເຊົ້າ) ແລະ ໃຫ້ບັນດາກົມກອງພາຍໃນ ທຫລ ແຈ້ງລາຍຊື່ຜູ້ທີ່ຖືກແຕ່ງຕັ້ງເຂົ້າຮ່ວມປ້ອງກັນເວນຍາມ ສົ່ງມາຍັງຫ້ອງການ (ພະແນກບໍລິຫານ) ພາຍໃນວັນທີ 02 ຕຸລາ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມໜັງສືແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ພານຸສັກ ແກ່ນວົງມະຈັນ

ຜູ້ປະສານງານ:
ທ່ານ ຊົມພູ ຟອງໂອສາ 020 52727272
ທ່ານ ນ ອຸໄລ ສົມພູວົງ 020 56654196

## ພາກກາງຄືນ

## ຕາຕະລາງເວນຍາມບັນດາກົມ ໃນຊ່ວງຕ້ອນຮັບວັນສ້າງຕັ້ງ ທຫລ  ຄົບຮອບ 57 ປີ ແລະ ບຸນຊ່ວງເຮືອ ນະຄອນຫຼວງວຽງຈັນ ປະຈຳປີ 2025

## ແຕ່ວັນທີ 5-9 ຕຸລາ 2025 ເລີ່ມແຕ່ເວລາ 18:00-6:00 ໂມງ

| ລ/ດ | ວັນເດືອນປີ | ຫ້ອງການ | | ກຄທ | ບກທ | ກພໜ | ກົມ ບຊ-ກງ | ກຈພ | ກຕຂ | ກນງ | ກົມ ຄງຕ | ກຄລຊ | ກົມກກ | ກຮມ | ລວມ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ພງ ຂັບລົດ | ຫ້ອງການ | | | | | | | | | | | | | |
| 1 | 5/10/2025 | 1 | 1 | 1 | | | | | | | | | 1 | 1 | 5 | ວັນອາທິດ |
| 2 | 6/10/2025 | 1 | 1 | | 1 | 1 | 1 | | | | | | | | 5 | ວັນລັດຖະການ |
| 3 | 7/10/2025 | 1 | 1 | | | | | 1 | 1 | 1 | | | | | 5 | ວັນລັດຖະການ |
| 4 | 8/10/2025 | 1 | 1 | | | | | | | | 1 | 1 | 1 | | 5 | ວັນລັດຖະການ |
| 5 | 9/10/2025 | 1 | 1 | 1 | 1 | | | | | | | | | 1 | 5 | ວັນລັດຖະການ |

### ພາກກາງເວັນ

### ຕາຕະລາງເວນຍາມບັນດາກົມ ໃນຊ່ວງຕ້ອນຮັບວັນສ້າງຕັ້ງ ທຫລ ຄົບຮອບ 57 ປີ ແລະ ບຸນຊ່ວງເຮືອ ນະຄອນຫຼວງວຽງຈັນ ປະຈຳປີ 2025

### ແຕ່ວັນທີ 5-9 ຕຸລາ 2025 ເລີ່ມແຕ່ເວລາ 8:30-18:00 ໂມງ

| ລ/ດ | ວັນເດືອນປີ | ຫ້ອງການ | | ກຄທ | ບກທ | ກພໜ | ກົມ ບຊ-ກງ | ກຈພ | ກຕຂ | ກນງ | ກົມ ຄງຕ | ກຄລຊ | ກົມກກ | ກຮມ | ລວມ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ພງ ຂັບລົດ | ຫ້ອງການ | | | | | | | | | | | | | |
| 1 | 5/10/2025 | 1 | 1 | | | 1 | 1 | 1 | | | | | | | 5 | ວັນອາທິດ |
| 2 | 6/10/2025 | 1 | 1 | | | | | | 1 | 1 | 1 | | | | 5 | ວັນລັດຖະການ |
| 3 | 7/10/2025 | 1 | 1 | | | | | | | | | 1 | 1 | 1 | 5 | ວັນລັດຖະການ |
| 4 | 8/10/2025 | 1 | 1 | 1 | 1 | 1 | | | | | | | | | 5 | ວັນລັດຖະການ |
| 5 | 9/10/2025 | 1 | 1 | | | | 1 | 1 | 1 | | | | | | 5 | ວັນລັດຖະການ |